# ວາງແຜນລ່ວງໜ້າຖ້າທ່ານມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງຈາກ COVID-19 ແລະໄຂ້ຫວັດໃຫຍ່

## ທ່ານມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງຈາກ COVID-19 ແລະ ໄຂ້ຫວັດໃຫຍ່ບໍ?

**ອັນນີ້ລວມມີ:**

- ຄົນອາຍຸ 60 ປີ ແລະ ແກ່ກວ່າ
- ແມ່ຍິງຖືພາ
- ຊາວອາບໍຣິຈີໂນ, ຊາວເກາະ ທໍເຣັສ ສະເທຣດ ແລະ ຊາວເກາະ ປາຊີຟິກ
- ຜູ້ທີ່ມີນໍ້າໜັກເກີນ, ມີໂຣກເບົາຫວານ, ໂຣກຫົວໃຈແລະຫຼອດເລືອດຮ້າຍແຮງ, ໂຣກປອດ ຊໍາເຮື້ອ (ລວມທັງໂຣກຫືດຮ້າຍແຮງທີ່ຕ້ອງເຂົ້າໂຮງໝໍ ໃນ 12 ເດືອນທີ່ຜ່ານມາ), ໂຣກຕັບຫຼືໝາກໄຂ່ຫຼັງຊໍາເຮື້ອຮ້າຍແຮງ, ມະເຮັງທີ່ອອກຣິດຫຼືຜູ້ທີ່ມີພູມຄຸ້ມກັນອ່ອນແອ
- ບາງຄົນທີ່ມີຄວາມພິການ ລວມທັງຄົນພິການທີ່ມີຜົນກະທົບຕໍ່ປອດ, ຫົວໃຈ ຫຼືລະບົບພູມຄຸ້ມກັນຂອງພວກເຂົາ
- ຜູ້ທີ່ຢູ່ໃນສະຖານທີ່ດູແລຜູ້ສູງອາຍຸ ແລະຄົນພິການ
- ຄົນອາຍຸ 18 ປີ ແລະ ແກ່ກວ່າທີ່ບໍ່ໄດ້ຮັບການສັກຢາປ້ອງກັນ.

ຖ້າທ່ານບໍ່ສະບາຍ, ນາຍໝໍຂອງທ່ານອາດຈະແນະນໍາໃຫ້ໃຊ້ຢາຕ້ານໄວຣັສເພື່ອຊ່ວຍໃຫ້ທ່ານດີຂຶ້ນ.

ທ່ານຈະຕ້ອງກິນຢານີ້ໄວເທົ່າທີ່ຈະໄວໄດ້ ຫຼັງຈາກທີ່ທ່ານບໍ່ສະບາຍ.

ວາງແຜນລ່ວງໜ້າ ແລະ ເວົ້າລົມກັບນາຍໝໍຂອງທ່ານດຽວນີ້ກ່ຽວກັບວ່າຢາຕ້ານໄວຣັສຈະ ເໝາະສົມກັບທ່ານຫຼືບໍ່.

ຖ້າທ່ານມີຄວາມກັງວົນດ້ານສຸຂະພາບ ແລະຕ້ອງການການຊ່ວຍເຫຼືອດ້ານພາສາ ຈົ່ງໂທຫາ TIS ຕາມເບີ **131 450** ແລະ ຖາມຫາ NSW Health Flu and COVID-19 Care ທີ່ Home Support Line ຕາມເບີ **1800 960 933**.

**ເຂົ້າຢ້ຽມເບິ່ງ www.nsw.gov.au ເພື່ອເອົາຂໍ້ມູນເພີ້ມເຕີມ**



© NSW Health May 2022.